International Labour Organization

ILO/Korea Partnership Programme

ILO brief

# ການຈ້າງງານນອກລະບົບໝາຍເຖິງຫຍັງ?

ມັງກອນ 2023

ການຈ້າງງານນອກລະບົບໝາຍເຖິງການຈັດຫາວຽກເຮັດງານທຳໃດໜຶ່ງທີ່ມີຕົວຕົນ ຫຼື ຖືກຕ້ອງຕາມກົດໝາຍ ແຕ່ບໍ່ຢູ່ພາຍໃຕ້ການຄຸ້ມຄອງຂອງລະບົບນິຕິກຳດ້ານແຮງງານແຫ່ງຊາດ, ລະບົບເສຍອາກອນລາຍໄດ້, ຫຼື ການເກີດສິດຕໍ່ອຸດໜູນປົກປ້ອງສັງຄົມ ຫຼື ຫຼັກຄໍ້າປະກັນດ້ານການຈ້າງງານໃດໜຶ່ງ ເຊັ່ນ: ການແຈ້ງລ່ວງໜ້າກ່ຽວກັບການຖືກຍົກເລີກສັນຍາ, ການຈ່າຍຊົດເຊີຍກໍລະນີເຈັບເປັນ, ຫຼື ການມີວັນພັກປະຈຳປີ ຫຼື ອຸດໜູນປ່ວຍການ.

ເຫັນວ່າຍັງມີການຈ້າງງານນອກລະບົບເກີດຂຶ້ນຢູ່ຂະແໜງການໃນລະບົບ. ຜູ້ອອກແຮງງານທີ່ບໍ່ເປັນທາງການ, ຊົ່ວຄາວ ແລະ ຕາມລະດູການທີ່ບໍ່ໄດ້ຮັບການປົກປ້ອງຈາກລະບົບປະກັນສັງຄົມ ຫຼື ອຸດໜູນດ້ານແຮງງານອື່ນໆ ຫຼື ຜູ້ທີ່ບໍ່ໄດ້ຮັບການຄຸ້ມຄອງດ້ານກົດໝາຍ ແມ່ນຈະຕົກຢູ່ໃນເງື່ອນໄຂການຈ້າງງານນອກລະບົບເຖິງເຂົາເຈົ້າຈະເຮັດວຽກຢູ່ໃນລະບົບກໍ່ຕາມ.

ອອກແຮງງານນອກລະບົບມີຫຼາຍກຸ່ມທີ່ມີເງື່ອນໄຂການຈ້າງງານທີ່ແຕກຕ່າງກັນໄປ (ຜູ້ປະກອບອາຊີບສ່ວນບຸກຄົນ, ຜູ້ໃຊ້ແຮງງານ, ຜູ້ອອກແຮງງານໃນຄົວເຮືອນ, ຫຼື ຜູ້ອອກແຮງງານທີ່ໄດ້ຮັບຄ່າຈ້າງ) ແລະ ມີສະຖານະພາບການຈ້າງງານທີ່ແຕກຕ່າງກັນ (ໃນລະບົບ, ນອກລະບົບ ແລະ ຂະແໜງຄົວເຮືອນ), ສະນັ້ນ ຄຳວ່າການຈ້າງງານນອກລະບົບຈຶ່ງຖືກວັດແທກໄດ້ຈາກຜົນລວມຂອງບັນດາຜູ້ອອກແຮງງານທັງໝົດທີ່ອອກແຮງງານນອກລະບົບ ຫຼື ໃນເງື່ອນໄຂນອກລະບົບຂອງວິສາຫະກິດຕ່າງໆ.



ການເຮັດວຽກຮູບແບບໃໝ່ມີບົດບາດສຳຄັນ ແລະ ມີທ່າອ່ຽງເພີ່ມຂຶ້ນຢູ່ຫຼາຍປະເທດແຕ່ບໍ່ໄດ້ຖືກຈັດຢູ່ໃນລະບົບການຈ້າງງານນອກລະບົບ ຫຼື ໃນລະບົບໃດໆ. ຮູບແບບວຽກໃໝ່ນີ້ແມ່ນໄດ້ຈ້າງຜູ້ອອກແຮງງານ "ໃນເສດຖະກິດກິດ Gig Economy" ແລະ ຜູ້ອອກແຮງງານໃນລະບົບດິຈິຕອນເປັນຈຳນວນຫຼາຍ. ຕົວຢ່າງ: ຟູດແພນດາ ແລະ ແອັບໂລກາ ດ້ານບໍລິການລົດເທັກຊີ ແມ່ນນຳໃຊ້ຮູບແບບການຈ້າງງານທີ່ໂຮມເອົາຜູ້ອອກແຮງງານຫຼາຍຄົນເຂົ້າເປັນກຸ່ມອັນດຽວກັນເຖິງແມ່ນວ່າເຂົາເຈົ້າຈະມີສະຖານະພາບເປັນຜູ້ປະກອບອາຊີບສ່ວນບຸກຄົນກໍ່ຕາມ. ກຸ່ມຜູ້ອອກແຮງງານເຫຼົ່ານີ້ບໍ່ໄດ້ຮັບສິດໃນການເຂົ້າເຖິງລະບົບປະກັນສັງຄົມໃດໆຈຶ່ງເຮັດໃຫ້ເຂົາເຈົ້າເກີດມີຄວາມບອບບາງຫຼາຍກວ່າ.



## ພັນທະຂອງປະກັນສັງຄົມໃນກໍລະນີທີ່ສາຍພົວພັນດ້ານການຈ້າງງານບໍ່ຈະແຈ້ງ



ການອະທິບາຍຈະແຈ້ງກ່ຽວກັບສາຍພົວພັນການຈ້າງງານແມ່ນມີຄວາມສຳຄັນຫຼາຍໂດຍສະເພາະແມ່ນໃນຍຸກເສດຖະກິດດີຈີຕອນທີ່ມີຜູ້ປະກອບອາຊີບສ່ວນບຸກຄົນເປັນຈຳນວນຫຼາຍ.

> ປະເທດອຣກວາຍ, ຄົນຂັບລົດແຕັກຊີນຳໃຊ້ຖານດີຈີຕ້ອນ (ເຊັ່ນ Uber) ເພື່ອເປັນເຄື່ອງມືໃນການສື່ສານໂດຍຜ່ານແອັບໃນໂທລະສັບທີ່ມີຊ່ອງອະນຍາດໃຫ້ຫັກຄ່າເງິນສົມທົບໂດຍກົງຈາກລາຄາໂດຍສານໂດຍຜ່ານລະບົບໂມໂນແທັກສ (monotax) ເພື່ອໃຫ້ຄົນຂັບລົດໄດ້ເຂົ້າກອງທຶນປະກັນສັງຄົມ ແລະ ເພື່ອເປັນການແຂ່ງຂັນລະຫວ່າງເສດຖະກິດແບບດັ່ງເດີມ ແລະ ເສດຖະກິດແບບດີຈີຕອນ.

ອີກຕົວຢ່າງໜຶ່ງກ່ຽວກັບສາຍພົວພັນການຈ້າງງານທີ່ບໍ່ມີຄວາມຈະແຈ້ງຫຼາຍກ່ວາໝູ່ແມ່ນພົບເຫັນຢູ່ໃນຂະແໜງການກໍ່ສ້າງ, ໂດຍມີຜູ້ອອກແຮງງານຫຼາຍຄົນຖືກຈ້າງໂດຍຜ່ານຜູ້ຮັບເໝົາລາຍຍ່ອຍ ແລະ ນາຍໜ້າທີ່ມີສັນຍາຈ້າງງານເປັນລາຍວັນ ຫຼື ລາຍອາທິດເທົ່ານັ້ນ. ມາດຕະການໜຶ່ງທີ່ເຮົາຈະນຳໃຊ້ເພື່ອຮັບປະກັນໃຫ້ຜູ້ອອກແຮງງານໃນໂຄງການກໍ່ສ້າງໄດ້ຖືກຄຸ້ມຄອງໂດຍກອງທຶນປະກັນສັງຄົມແມ່ນໃຫ້ເກັບເງິນສົມທົບຕາມສັດສ່ວນມູນຄ່າຂອງໂຄງການກໍ່ສ້າງໂດຍບໍ່ຕ້ອງອີງໃສ່ຂໍ້ມູນການຈ່າຍເງິນຄ່າແຮງງານຂອງເຂົາເຈົ້າ, ທັງນີ້ກໍ່ເພື່ອຮັບປະກັນໃຫ້ກອງທຶນປະກັນສັງຄົມສາມາດປົກຄຸມຜູ້ອອກແຮງງານທຸກຄົນໃນໂຄງການກໍ່ສ້າງດັ່ງກ່າວໄດ້ເຊັ່ນດຽວກັນ.

> ຕົວຢ່າງ ໃນປະເທດອິນເດຍ, ພາຍໃຕ້ກົດໝາຍສະຫວັດດີການຂອງຜູ້ອອກແຮງງານໃນຂະແໜງການກໍ່ສ້າງຕຶກອາຄານ ແລະ ກໍ່ສ້າງອື່ນໆ ປີ 1996, ເຫັນວ່າໂຄງການກໍ່ສ້າງໄດ້ຫັກ 1-2% ຂອງມູນຄ່າໂຄງການເຂົ້າກອງທຶນສະຫວັດດີການຂອງຜູ້ອອກແຮງງານ, ເຊິ່ງກອງທຶນນີ້ແມ່ນຈະໃຊ້ຈ່າຍເຂົ້າເປັນອຸດໜູນອຸບັດຕິເຫດແຮງງານ,ປິ່ນປົວສຸຂະພາບ (ໂດຍຜ່ານກອງທຶນ Rashtriya Swasthya Bima Yojana) ແລະ ບຳນານ.

ບົດສະຫຼຸບຫຍໍ້ຂອງອົງການແຮງງານສາກົນແມ່ນສ່ວນໜຶ່ງຂອງຜົນການສຶກສາດ້ານປະລິມານຂອງກຳລັງແຮງງານ ແລະ ໂຄງສ້າງດ້ານວິສາຫະກິດໃນ ສປປ ລາວ ເພື່ອເຂົ້າໃຈເລິກເຊິ່ງກ່ຽວກັບພາບລວມຂອງແຮງງານນອກລະບົບເພື່ອນຳມາສູ່ການອອກແບບນະໂຍບາຍປະກັນສັງຄົມ. ການສຶກສາຄັ້ງນີ້ແມ່ນໄດ້ຮັບທຶນສະໜັບສະໜູນຈາກໂຄງການຮ່ວມມືຂອງອົງການແຮງງານສາກົນ ແລະ ສ. ເກົາຫຼີ ແລະ ດຳເນີນການສຶກສາໂດຍສະຖາບັນຄົ້ນຄ້ວາດ້ານການຄຸ້ມຄອງນະໂຍບາຍອອດສຟອດ.

ໂດຍການຮ່ວມມືກັບ


ລາຍລະອຽດການຕິດຕໍ່

**ສຳນັກງານອົງການແຮງງານສາກົນສຳລັບພາກພື້ນອາຊີ ແລະ ປາຊີຟິກ**

ຕຶກສະຫະປະຊາຊາດ, ຖະໜົນລາດສະດຳເນີນນອກ, ບາງກອກ 10200, ຣາຊາອານາຈັກໄທ

| | | | |
|---|---|---|---|
| ນາງ ເລີບລີນ ເດ | ຜູ້ຈັດການໂຄງການ | ອີເມວ: | del@ilo.org |
| ທ. ທອງເຫຼັກ ຊິງ | ຜູ້ປະສານງານໂຄງການ | ອີເມວ: | thongleck@ilo.org |
| ນ. ນຸດທອງ ອາລຸນທອງ | ຜູ້ປະສານງານໂຄງການ | ອີເມວ: | alounthong@ilo.org |

ໂທລະສັບ: +66 2288 1234
ແຟັກ: +66 2280 1735
ອີເມວ: BANGKOK@ilo.org


© ອົງການແຮງງານສາກົນ 2023